## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 15 ຕຸລາ 2023 (10-15-2023)

---

### ມັນສຳຄັນແທ້ໆບໍ່ວ່າ "ຄວາມຈິງ" ອັນໃດທີ່ຂ້ອຍເຊື່ອ?

**ຈຸດສຳຄັນໃນບົດຮຽນ:** ການຮູ້ຈັກຄວາມຈິງຂອງພຣະຄຣິດເປັນວິທີດຽວທີ່ພວກເຮົາສາມາດມີປະສົບການເສຣີພາບ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

*ມີຫຍັງແດ່ທີ່ທ່ານແປກໃຈທີ່ຮູ້ວ່າເປັນຄວາມຈິງ?*

ລັດທິຫຼັງສມັຍໃໝ່(postmodernism)ໄດ້ກ່າວໄວ້ວ່າ: ພວກເຮົາແຕ່ລະຄົນສາມາດສ້າງສິ່ງທີ່ເປັນຈິງຕາມແບບສະບັບຂອງຕົນເອງ. ວິທີການນຶກຄິດຫຼັງສມັຍໃໝ່ນີ້ຄອບງຳຫຼາຍສະຖາບັນຂອງສັງຄົມອັນທັນສມັຍ. ຄັ້ງນຶ່ງຂ້າພະເຈົ້າໄດ້ມີການແລກປ່ຽນທາງສື່ສັງຄົມກັບບຸກຄົນລັດທິຫຼັງສມັຍໃໝ່ຄົນນຶ່ງ ທີ່ຄິດວ່າຕົນເອງເປັນຜູ້ທີ່ເຊື່ອວ່າທຸກຄົນຈະສາມາດສ້າງຄວາມຈິງຂອງຕົນເອງຂຶ້ນມາໄດ້. ໃນຕອນເລີ້ມແລກຂອງການສົນທະນາອອນໄລນ໌ຂອງພວກເຮົາ, ລັດທິຫຼັງສມັຍນີ້ໄດ້ເລີ້ມໂຈມຕີຄວາມເຊື່ອຂອງຂ້າພະເຈົ້າໂດຍທັນທີທັນໃດ. ໃນຄຳເວົ້າຂອງຊາຍຄົນນີ້ກ່ຽວກັບຄວາມເຊື່ອຂອງຊາວຄຣິສະຕຽນ, ລາວຂຽນໄວ້ວ່າ:

- *"ພວກທ່ານເປັນຄົນໄຮ້ສາລະ. ພຣະເຈົ້າເປັນຄວາມເຊື່ອໃນຍຸກບູຮານສມັຍທອງແດງ. ພຣະອົງບໍ່ໄດ້ເຮັດໃຫ້ເກີດຟ້າ ຮ້ອງແລະພຣະອົງບໍ່ໄດ້ສ້າງຈັກກະວານ. ອີກປະການນຶ່ງ, ຂ້ອຍເປັນຜູ້ສແວງຫາຄວາມສຸກ(hedonist)ເພາະວ່າມະນຸດມີຈິງ ແລະເຮົາເປັນຜູ້ສ້າງຄວາມຈິງແລະສິນທັມ, ບໍ່ແມ່ນພຣະເຈົ້າເປັນຄົນສ້າງ. ພຣະຄັມພີເປັນເໝືອນຂີ້ເຫຍື້ອລ້າໆ(complete garbage). ມັນເປັນການເລົ່າເຣື່ອງທີ່ຂຽນໄວ້ທີ່ໜ້າຢ້ານທີ່ມີສິລທັມຮ້າຍແຮງເທົ່າທຽມກັນຂຽນໄວ້ໃນນັ້ນ. ນັ້ນເປັນເຫດຜົນທີ່ຂ້ອຍບໍ່ມີບັນຫາທີ່ຈະເອົາມັນຖິ້ມໃສ່ໄວ້ບ່ອນທີ່ມັນສົມຄວນຈະຢູ່."*

ພວກເຮົາກຳລັງດຳເນີນຊີວິດຢູ່ໃນສມັຍທີ່ຜູ້ຄົນເຊື່ອວ່າພວກເພິ່ນໄດ້ຮັບອະນຸຍາດໃຫ້ສ້າງຄວາມຈິງຂອງພວກເພິ່ນເອງ. ແນວໃດກໍຕາມ, ໃນຂ່າວປະເສີດຂອງໂຢຮັນ ພວກເຮົາເຫັນໄດ້ວ່າຄວາມຈິງບໍ່ແມ່ນເຣື່ອງຂອງຈິນຕະນາການຂອງມະນຸດ. <u>**ຄວາມຈິງມີພື້ນຖານອີງໃສ່ການຊົງເປີດເຜີຍຈາກພຣະເຈົ້າອົງຊົງທ່ຽງແທ້ ຊຶ່ງໄດ້ຊົງກ່າວກັບພວກເຮົາຢ່າງແທ້ຈິງໃນປວັດສາດ**</u>.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

## 1. <u>ໂຢຮັນ 3:19-21</u>

*19 ນີ້ແຫຼະ, ແມ່ນການຕັດສິນລົງໂທດຄືວ່າຄວາມສວ່າງໄດ້ເຂົ້າມາໃນໂລກແຕ່ມະນຸດໄດ້ຮັກຄວາມມືດຫລາຍກວ່າຮັກຄວາມສວ່າງເພາະ*
*ກິຈການຂອງເຂົາຊົ່ວ. 20 ດ້ວຍວ່າທຸກຄົນທີ່ເຮັດຊົ່ວກໍຊັງຄວາມສວ່າງ ແລະບໍ່ມາເຖິງຄວາມສວ່າງ ເພາະຢ້ານວ່າການເຮັດຂອງຕົນຈະ*
*ເປີດເຜີຍ. 21 ແຕ່ບຸກຄົນທີ່ເຮັດຕາມຄວາມຈິງກໍມາຫາຄວາມສວ່າງ ເພື່ອໃຫ້ການຂອງຕົນປະກົດວ່າໄດ້ເຮັດດ້ວຍອາສັຍພຣະເຈົ້າ.*

ລັດທິຫຼັງສມັຍໃໝ່ຈະເລີນເຕີບໂຕອອກມາຈາກມຸມມອງຂອງໂລກຊຶ່ງຮຽກວ່າ ຄວາມເປັນທັມມະຊາດ(Naturalism)ຊຶ່ງສົມມຸດວ່າຈັກກະວານທັມມະຊາດ, ກຳລັງດຳເນີນການໂດຍກົດໝາຍທັມມະຊາດ, ຄືທຸກສິ່ງທີ່ມີຢູ່. ດັ່ງນັ້ນ, <u>ລັດທິຫຼັງສມັຍໃໝ່ເຊື່ອວ່າບໍ່ມີພຣະເຈົ້າ</u>, ແລະດ້ວຍເຫດນີ້ຈະບໍ່ມີແຫຼ່ງທີ່ເປັນໄປໄດ້ສຳລັບຄວາມເຊື່ອທາງດ້ານສິລທັມ. ແລະຍ້ອນວ່າພວກເຂົາເຈົ້າບໍ່ຮູ້ຈັກພຣະເຈົ້າ, ເຂົາເຈົ້າຈຶ່ງບໍ່ມີທາງເລືອກນອກຈາກຈະສ້າງສິລທັມໂດຍນຳໃຊ້ຄວາມມັກສ່ວນຕົວຂອງຕົນເອງ. ບໍ່ມີຫຍັງເປັນຄວາມຈິງທີ່ຈະສນັບສນູນສົມມຸດຕິຖານຂອງເຂົາເຈົ້າກ່ຽວກັບສິລທັມ, ແຕ່ວ່າເຂົາເຈົ້າສັດຊື່ເຊື່ອວ່າທັສນະຂອງເຂົາເຈົ້າເປັນຕົວແທນຂອງຄວາມຈິງ.

ໃນພຣະຄັມພີ ໂຢຮັນ ບົດທີ່ 3, ພວກເຮົາຖືກແນະນຳໃຫ້ຮູ້ຈັກຟາຣີຊາຍຄົນນຶ່ງຊື່ ນີໂກເດມ, ຊຶ່ງໄດ້ມາຫາພຣະເຢຊູໃນຕອນກາງ

ຄືນເພື່ອຈະໄດ້ສົນທະນາກັບພຣະອົງ. ເບິ່ງຄືວ່ານີໂກເດມມີຄວາມຈິງໃຈກ່ຽວກັບຄວາມເຊື່ອຂອງລາວ, ແຕ່ລາວຮູ້ສຶກສັບສົນຫຼາຍເພາະພັນທະກິດແລະການສັ່ງສອນຂອງພຣະເຢຊູເບິ່ງຄືວ່າຂັດກັບສາສນາສາດຂອງຊາວຢິວໃນສມັຍນັ້ນ. ພຣະເຢຊູໄດ້ຊົງແບ່ງປັນຄວາມຈິງຝ່າຍຈິດວິນຍານແກ່ນີໂກເດມ ກ່ຽວກັບວິທີທີ່ພຣະເມຊີອາຈະຊົງນຳພາຊີວິດນິຣັນດອນແກ່ບັນດາຜູ້ທີ່ເຊື່ອໃນພຣະອົງ (ຢຮ 3:14-18; ຈຊບ 21:4-6). ເຖິງແມ່ນວ່າຄຳອະທິບາຍຂອງພຣະເຢຊູ, ນີໂກເດມ, ບໍ່ໄດ້ເຂົ້າໃຈຄວາມໝາຍຂອງພຣະອົງ. ລາວພະຍາຍາມຕີຄວາມໝາຍຄຳສັ່ງສອນຂອງພຣະເຢຊູ ອີງຕາມຄວາມເຂົ້າໃຈຂອງຄວາມຈິງທີ່ແຕກຕ່າງຈາກສິ່ງທີ່ພຣະເຢຊູໄດ້ຊົງແບ່ງປັນໄປແລ້ວນັ້ນ. ນີໂກເດມເຊື່ອວ່າຄວາມລອດພົ້ນສາມາດບັນລຸໄດ້ໂດຍການຮັກສາກົດໝາຍຂອງຊາວຢິວ, **ແຕ່ວ່າພຣະເຢຊູໄດ້ຊົງເນັ້ນໜັກວ່າຄວາມລອດພົ້ນໄດ້ໂດຍຄວາມເຊື່ອໃນພຣະເມຊີອາ.**

ເນື່ອງຈາກນີໂກເດມພະຍາຍາມດີ້ນຣົນທີ່ຈະເຂົ້າໃຈ, ພຣະເຢຊູຈຶ່ງໄດ້ຊົງອະທິບາຍຕື່ມອີກແລະບອກນີໂກເດມວ່າ: "ຄວາມສວ່າງໄດ້ມາສູ່ໂລກແລ້ວ." ພວກເຮົາ(ຄຣິສະຕຽນ)ເຂົ້າໃຈວ່າ "<u>ຄວາມສວ່າງ</u>" ນີ້ແມ່ນອ້າງອີງເຖິງອົງພຣະເຢຊູ, ແຕ່ວ່ານີໂກເດມບໍ່ໄດ້ເຂົ້າໃຈເຣື່ອງລາວຄຳບັນລະຍາຍນີ້. ຄຳສັ່ງສອນຂອງພຣະເຢຊູອາດຈະບໍ່ມີຄວາມໝາຍສຳລັບຜູ້ທີ່ບໍ່ເປີດໃຈຕໍ່ຄວາມສວ່າງທີ່ພຣະເຈົ້າໄດ້ຊົງເປີດເຜີຍໃຫ້ແລ້ວ. ຄົນສ່ວນໃຫຍ່ມັກສືບຕໍ່ຢູ່ໃນ "ຄວາມມືດ" ຂອງຄວາມເຊື່ອດັ້ງເດີມຂອງພວກເຂົາເຈົ້າ. ພຣະເຢຊູໄດ້ຊົງບອກນີໂກເດມວ່າເປັນດ້ວຍເຫດໃດຜູ້ຄົນຈຶ່ງບໍ່ໄດ້ເປີດຮັບເອົາຄວາມສວ່າງນັ້ນ. <u>ເຫດຜົນກໍຄື</u>: **ໂດຍການເປີດໃຈຮັບເອົາແສງສວ່າງ, ຄວາມບາບໃນຊີວິດຂອງພວກເພິ່ນກໍຈະຖືກເປີດເຜີຍອອກມາໃຫ້ເຫັນ.**

ຂໍ້ທີ່ 21, ພຣະເຢຊູໄດ້ຊົງຊີ້ໃຫ້ເຫັນວ່າມີບາງຄົນທີ່ຈິງໃຈກ່ຽວກັບຄວາມເຊື່ອຂອງພວກເຂົາເຈົ້າ-ບັນດາຜູ້ທີ່ເປີດໃຈໃຫ້ຄວາມສວ່າງຂອງພຣະເຈົ້າທີ່ສ່ອງແສງເຂົ້າມາໃນຊີວິດຂອງພວກເພິ່ນ ແລະເປີດເຜີຍຄວາມຊົ່ວຮ້າຍທີ່ຈຳເປັນຕ້ອງໄດ້ຊຳລະລ້າງອອກໄປໃຫ້ສະອາດ. ບຸກຄົນເຫຼົ່ານີ້ໄດ້ເຂົ້າໃຈວ່າພຣະເຈົ້າຊົງຮຽກຮ້ອງ ໃຫ້ມີຄວາມຊອບທັມແລະຊົງຕັດສິນບາບ. ພວກເຂົາເຈົ້າເຂົ້າໃຈວ່າ: <u>ການໃຫ້ອະພັຍບໍ່ສາມາດໄດ້ຮັບໂດຍການເຮັດຄວາມດີ</u>, <u>ແຕ່ການໃຫ້ອະພັຍແມ່ນຂອງຂວັນແຫ່ງພຣະຄຸນຂອງພຣະເຈົ້າ</u>. ຄວາມຈິງແມ່ນພວກເຮົາບໍ່ສາມາດເຂົ້າໃຈຄວາມຈິງ-**ຄວາມຈິງຂອງພຣະເຈົ້າ**-ຕາບໃດທີ່ພວກເຮົາຢູ່ໃນຄວາມມືດ. ແຕ່ເມື່ອພວກເຮົາເລືອກທີ່ຈະກ້າວເຂົ້າໄປໃນຄວາມສວ່າງຂອງພຣະເຢຊູ, <u>ຄວາມສວ່າງຂອງພຣະອົງຊົງເປີດເຜີຍຄວາມບາບຂອງພວກເຮົາ</u> ແລະ<u>ເປີດຕາຂອງພວກເຮົາໄປສູ່ຊີວິດທີ່ພວກເຮົາສາມາດມີຢູ່ໃນພຣະຄຣິດ</u>. ເມື່ອພວກເຮົາໂອບກອດເອົາຄວາມສວ່າງຂອງອົງພຣະຄຣິດ, **ພວກເຮົາກໍມີຊີວິດຢູ່!** ນອກຈາກນັ້ນ, ຊີວິດທີ່ພວກເຮົາດຳເນີນຢູ່ຊີ້ໃຫ້ເຫັນເຖິງວຽກງານຂອງພຣະເຈົ້າ. ດັ່ງທີ່ຂໍ້ 21 ຊີ້ໃຫ້ເຫັນ: *"ວຽກງານຂອງລາວອາດຈະຖືກສະແດງໃຫ້ສຳເລັດໂດຍພຣະເຈົ້າ."* **<u>ຄວາມຈິງຂອງພຣະຄຣິດທີ່ພວກເຮົາໂອບກອດເອົາທາງພາຍໃນ ໄດ້ເຫັນທາງພາຍນອກ ໂດຍວິທີການທີ່ພວກເຮົາດຳເນີນຊີວິດ</u>.**

*ມີວິທີໃດແດ່ທີ່ບັນດາຜູ້ຄົນມັກຄວາມມືດ ແທນທີ່ຈະມັກແສງສວ່າງ?*

## 2. <u>ໂຢຮັນ 8:31-32</u>

*31. ພຣະເຢຊູຊົງກ່າວຕໍ່ພວກຢິວທີ່ເຊື່ອຖືໃນພຣະອົງວ່າ, "ຖ້າທ່ານທັງຫຼາຍຕັ້ງໝັ້ນຄົງຢູ່ໃນຖ້ອຍຄຳຂອງເຮົາ ພວກທ່ານກໍເປັນສາວົກແທ້ຂອງເຮົາ. 32. ແລ້ວພວກທ່ານຈະຮູ້ຈັກຄວາມຈິງ ແລະຄວາມຈິງນັ້ນຈະເຮັດໃຫ້ພວກທ່ານເປັນອິສຣະ."*

ຫຼາຍໆຄົນຖືວ່າຄວາມຈິງແມ່ນອີງໃສ່ພື້ນຖານກ່ຽວກັບການພົວພັນ(ສາຍສັມພັນ). ນັ້ນໝາຍຄວາມວ່າ, ຄວາມຈິງນັ້ນບໍ່ແນ່ນອນແຕ່ສາມາດປ່ຽນແປງໄດ້ໂດຍອີງໃສ່ສະຖານະການຂອງຕົນເອງ. ແຕ່ໜ້າເສັຽດາຍ, ຄວາມຄິດທີ່ຜິດພາດນີ້ກຳລັງພະຍາຍາມຄືບຄານເຂົ້າໄປໃນຄຣິສຕະຈັກ. <u>ຄວາມຈຳເປັນທີ່ຊາວຄຣິສະຕຽນຈະຕ້ອງເຂົ້າໃຈພຣະຄັມພີຢ່າງໜັກແໜ້ນ ໃນຖານະການເປີດເຜີຍທີ່ແທ້ຈິງຈາກພຣະເຈົ້າອົງທ່ຽງແທ້ ແມ່ນເປັນສິ່ງທີ່ສຳຄັນກວ່າທີ່ເຄີຍມີມາ</u>. ຫຼາຍຄົນ, ແມ້ແຕ່ພາຍໃນຄຣິສຕະຈັກ, ກໍລົ້ມລຸກຄຸກຄານໃນການຍອມຮັບຮູ້ຄຳສອນຂອງພຣະຄັມພີວ່າແມ່ນພຣະຄຳທີ່ມາຈາກພຣະເຈົ້າ ຊຶ່ງບໍ່ສາມາດປະນີປະນອມໃຫ້ຖືກຕາມກົດເກນ.

ໃນສມັຍພຣະເຢຊູ, ພວກຊາວຢິວມີຄວາມເຊື່ອໃນພຣະຄັມພີດັ່ງກ່າວນັ້ນ, ແຕ່ພວກເພິ່ນແປຄວາມໝາຍຂອງພຣະຄັມພີໄປໃນທາງຜິດ. ເຊັ່ນດຽວກັນກັບພວກຄົນໃນສມັຍໃໝ່ທີ່ຕີຄວາມໝາຍພຣະຄັມພີຜິດ ເນື່ອງຈາກຄວາມເຊື່ອທີ່ຜິດຂອງພວກເຂົາເຈົ້າ, ພວກຟາຣີ

ຊາຍໄດ້ຕີຄວາມໝາຍພຣະຄັມພີຜິດເພາະຄວາມເຊື່ອທີ່ຜິດຂອງເພິ່ນ. ການຕີຄວາມໝາຍຜິດທັງສອງຈຳພວກນີ້ນຳໄປສູ່ການໂຈມຕີພຣະເຢຊູແລະບັນດາຜູ້ຕິດຕາມຂອງພຣະອົງ.

ພຣະຄັມພີ ໂຢຮັນ ບົດທີ່ 8 ໄດ້ເລີ້ມຕົ້ນດ້ວຍເຣື່ອງລາວຂອງພວກຟາຣີຊາຍ ຊຶ່ງໄດ້ນຳຍິງຄົນນຶ່ງໃນຖານຫຼິ້ນຊູ້ມາຫາພຣະເຢຊູ. ພວກເຂົາໃຊ້ຍິງຄົນນີ້ເປັນເຄື່ອງມືເພື່ອຫ້າງແຮ້ວໃສ່ພຣະອົງ. ພຣະເຢຊູຊົງສລາດເໜືອພວກເຂົາແລະພວກຜູ້ໂຈມຕີໄດ້ໜີໄປ. ຈາກນັ້ນພຣະອົງໄດ້ຊົງກ່າວຕໍ່ຝູງຊົນວ່າ: "**ເຮົານີ້ແຫຼະ ເປັນຄວາມສວ່າງຂອງໂລກ**"(ຢຮ 8:12). ການປ້ອງກັນຂອງພຣະເຢຊູນັ້ນໜັກແໜ້ນຫຼາຍໃນໝູ່ຄົນທີ່ໄດ້ຍິນພຣະຄຳຂອງພຣະອົງ "<u>ມີຫລາຍຄົນໄດ້ເຊື່ອໃນພຣະອົງ</u>." (ຂໍ້ 30). ພຣະເຢຊູໄດ້ຊົງໃຊ້ໂອກາດນີ້ສັ່ງສອນບັນດາຜູ້ເຊື່ອໃໝ່ເຫຼົ່ານີ້ ຄວາມຈິງອັນເລິກເຊິ່ງກ່ຽວກັບພຣະອົງເອງ. ສິ່ງທີ່ພຣະເຢຊູໄດ້ຊົງປະກາດແມ່ນວ່າ <u>**ພຣະອົງເປັນພຣະເມຊີອາ**</u> ທີ່ໄດ້ຊົງຖືກທຳນວາຍໃນພຣະຄັມພີ, ແລະສິ່ງທີ່ພຣະອົງກຳລັງສັ່ງສອນນັ້ນເປັນຕົວແທນ(ໝາຍເຖິງ)ຄວາມຈິງ. ພຣະອົງຊົງມີພຣະປະສົງໃຫ້ບັນດາຜູ້ເຊື່ອໃໝ່ເຫຼົ່ານີ້ໃຫ້ຮູ້ວ່າພວກເຂົາເຈົ້າສາມາດໄວ້ໃຈໃນສິ່ງທີ່ພຣະອົງຊົງກ່າວ, ແລະຖ້າວ່າພວກເພິ່ນຕິດຕາມພຣະອົງພວກເຂົາເຈົ້າຈະຮູ້ຈັກ<u>ປະເພດຂອງເສຣີພາບທີ່ເປັນໄປບໍ່ໄດ້ໂດຍທາງອື່ນ</u>.

ໂດຍການໃຊ້ຄຳວ່າ: "<u>ຄວາມຈິງ</u>", ພຣະເຢຊູໄດ້ຊົງສະແດງແນວຄິດທີ່ເລິກເຊິ່ງຫຼາຍກວ່າທີ່ຄົນສ່ວນຫຼາຍເຂົ້າໃຈ. ສຳລັບຫຼາຍຄົນ, ຄວາມຈິງແມ່ນແນວຄວາມຄິດທີ່ບໍ່ມີຕົວຕົນ, ໂດຍສະເພາະໃນສັງຄົມທີ່ທັນສມັຍຂອງພວກເຮົາທີ່ເຊື່ອວ່າທຸກຄົນສາມາດມີ "<u>ຄວາມຈິງຂອງຕົນເອງ.</u>" ແຕ່ຄວາມເຂົ້າໃຈໃນພຣະຄັມພີກ່ຽວກັບຄວາມຈິງແມ່ນບໍ່ກ່ຽວຂ້ອງຫຍັງເລີຍ. ແທ້ຈິງແລ້ວ, ພວກເຮົາສາມາດໄປໄກກວ່າທີ່ຈະຢືນຢັນວ່າ <u>**ຄວາມຈິງເທົ່າກັບຄວາມເປັນຈິງ**</u>. ພຣະເຢຊູໄດ້ຊົງສເນີໂຄງສ້າງທີ່ແຕກຕ່າງກັນທັງໝົດສຳລັບຄວາມເປັນຈິງ. ການສັ່ງສອນຂອງພຣະອົງໄດ້ສະແດງທັສນະວ່າ: ພຣະປະສົງຂອງພຣະເຈົ້າບໍ່ແມ່ນເພື່ອສ້າງຕັ້ງອານາຈັກເທິງແຜ່ນດິນໂລກທີ່ມີພຣະເມຊີອາເປັນກະສັດຂອງຕົນ, ແຕ່ເພື່ອສນອງວິທີການສຳລັບຄວາມຊອບທັມທີ່ຈະປົກຄອງຢູ່ໃນໃຈຂອງບຸກຄົນ <u>ເພື່ອໃຫ້ພວກເຂົາເຈົ້າສາມາດປະສົບຄວາມສຳພັນອັນນິຣັນດອນສ່ວນບຸກຄົນກັບພຣະອົງ</u>. ມັນພຽງແຕ່ຢູ່ໃນຂອບຄວາມສັມພັນສ່ວນຕົວເທົ່ານັ້ນທີ່ຄົນເຮົາສາມາດຮູ້ຄວາມຈິງ-<u>**ຄວາມຈິງທີ່ແທ້ຈິງ**</u>-ແລະປະສົບການເສຣີພາບທີ່ເກີດຂຶ້ນພາຍໃນຄວາມສັມພັນນັ້ນ.

*ເມື່ອໃດທີ່ທ່ານເຫັນຄວາມຈິງນຳເສຣີພາບມາສູ່ຊີວິດຂອງໃຜຜູ້ນຶ່ງ?*

## 3. <u>ໂຢຮັນ 8:33-36</u>

*33. ເຂົາທູນຕອບພຣະອົງວ່າ, "ພວກເຮົາເປັນເຊື້ອສາຍຂອງອັບຣາຮາມ ແລະບໍ່ໄດ້ເປັນຂ້ອຍຂ້າຂອງຜູ້ໃດຈັກເທື່ອ ເປັນຫຍັງທ່ານຈຶ່ງເວົ້າວ່າ "ພວກທ່ານຈະເປັນອິສຣະ." 34. ພຣະເຢຊູຊົງຕອບເຂົາວ່າ, "ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ທຸກຄົນທີ່ເຄີຍເຮັດການຜິດບາບກໍເປັນຂ້ອຍຂ້າຂອງຄວາມບາບ. 35. ຂ້ອຍຂ້າບໍ່ຕັ້ງຢູ່ໃນຄົວເຮືອນຕລອດໄປ ແຕ່ບຸດກໍຕັ້ງຢູ່ຕລອດໄປ. 36. ເຫດສັນນັ້ນຖ້າພຣະບຸດຈະເຮັດໃຫ້ທ່ານທັງຫຼາຍເປັນອິສຣະ ພວກທ່ານກໍຈະເປັນອິສຣະແທ້ຈິງ.*

ມາເຖິງຈຸດນີ້, ພຣະເຢຊູຊົງໄດ້ຮັບສິ່ງທີ່ດີທີ່ສຸດຈາກພວກຟາຣີຊາຍໃນທຸກຮອບ, ຊຶ່ງເຮັດໃຫ້ພວກເຂົາເຈົ້າຍິ່ງໝົດຫວັງທີ່ຈະທຳລາຍຄຳສັ່ງສອນຂອງພຣະອົງ. ໃນພຣະຄັມພີ ໂຢຮັນ 8:32, ເມື່ອພຣະເຢຊູໄດ້ຊົງກ່າວວ່າ: "*ແລ້ວພວກທ່ານຈະຮູ້ຈັກຄວາມຈິງແລະຄວາມຈິງນັ້ນຈະເຮັດໃຫ້ພວກທ່ານເປັນອິສຣະ*", ພວກຟາຣີຊາຍຍັງມີອີກໂອກາດນຶ່ງທີ່ຈະໂຈມຕີພຣະອົງ. ພວກເຂົາໄດ້ບິດເບືອນພຣະຄຳຂອງພຣະເຢຊູເພື່ອເຮັດໃຫ້ພຣະຄຳຂອງພຣະອົງມີຄວາມໝາຍແຕກຕ່າງທັງໝົດໄປຈາກສິ່ງທີ່ພຣະອົງຊົງໝາຍເຖິງແທ້ໆ. ພວກເຂົາເຈົ້າຢືນຢັນວ່າ, ໃນຖານະເປັນລູກຫຼານຂອງອັບຣາຮາມ, ພວກເຂົາເຈົ້າມີອິສຣະແລ້ວເພາະວ່າພວກເພິ່ນບໍ່ໄດ້ເຄີຍເປັນທາດຂອງຜູ້ໃດ. ເບິ່ງທາງພາຍນອກ, ການຢືນຢັນຂອງຊາວຢິວແມ່ນບໍ່ຖືກຕ້ອງຢ່າງຈະແຈ້ງ. ປະຊາຊົນຊາວຢິວມີປວັດສາດອັນຍາວນານໃນການຖືກຄອບງຳ, ແມ້ກະທັ້ງການເປັນຂ້າທາດ. ພວກເຂົາເຈົ້າໄດ້ຕົກເປັນຂ້າທາດຂອງຊາວເອຢິບ, ຂອງຊາວອັດຊີເຣັຽ, ແລະຂອງຊາວບາບີໂລນ. ແມ້ແຕ່ໃນສມັຍຂອງພວກເຂົາເຈົ້າເອງ, ກຸງໂຣມ ໄດ້ຄອບງຳຊາວຢິວ. ດັ່ງນັ້ນ, ຄວາມໝາຍຂອງພວກເຂົາອາດຈະມີຄວາມແຕກຕ່າງກັນທາງຈິດວິນຍານຫຼາຍກວ່າ. ພວກເຂົາເຈົ້າຖືວ່າຕົນເອງມີອິສຣະພາບພາຍໃນ(inner-freedom) ພຽງແຕ່ຍ້ອນວ່າພວກເພິ່ນມີຄວາມສັມພັນກັບອັບຣາຮາມ.

*ອິສລະພາບໃນພຣະຄຣິດ ມີລັກສະນະຮູບຊົງແນວໃດ?*

ໃນພຣະຄັມພີ ໂຣມ ບົດທີ່ 6 ຂໍ້ 16-23, ອັຄສາວົກໂປໂລໄດ້ເວົ້າຢ່າງກວ້າງຂວາງກ່ຽວກັບການເປັນທາດຂອງຄວາມບາບ. ໂປໂລໄດ້ຊີ້ໃຫ້ເຫັນວ່າທຸກຄົນເປັນທາດ, ແຕ່ວ່າ <u>ແຕ່ລະຄົນຕ້ອງເລືອກເອົາຜູ້ທີ່ຈະເປັນນາຍຂອງຕົນ</u>: **ບາບ** ຫຼື **ພຣະເຈົ້າ**. ໃນຂໍ້ 23, ໂປໂລໄດ້ເຮັດຈຸດດຽວກັນກັບພຣະເຢຊູຊົງໄດ້ເຮັດໃນຂໍ້ພຣະຄໍາໃນມື້ນີ້ ໃນເມື່ອລາວໄດ້ກ່າວວ່າ:*"ດ້ວຍວ່າ, ຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊະທານອັນໂຜດມາແຕ່ພຣະເຈົ້າ ກໍຄືຊີວິດອັນຕລອດໄປເປັນນິດໃນພຣະເຢຊູຄຣິດເຈົ້າຂອງພວກເຮົາ."* ຄວາມຈິງ, ຄໍາສອນໃນພຣະຄັມພີກໍຈະແຈ້ງວ່າເຫດຜົນທີ່ພຣະເຈົ້າໄດ້ສ້າງມະນຸດຂຶ້ນມາແມ່ນເພື່ອການຊົງມີຄວາມສຸກກັບຄວາມສັມພັນສ່ວນພຣະອົງກັບມະນຸດຊາດ. ແຕ່ດ້ວຍຄວາມບໍ່ເຊື່ອຟັງຂອງອາດາມແລະເອວາ, ບາບໄດ້ກາຍເປັນອຸປສັກທີ່ຂັດຂວາງຄວາມສັມພັນນັ້ນ. ຢ່າງໃດກໍຕາມ, ພຣະເຈົ້າບໍ່ຊົງປ່ອຍໃຫ້ສິ່ງນັ້ນມາຂັດຂວາງພຣະປະສົງຂອງພຣະອົງ. ດັ່ງນັ້ນ, ພຣະອົງຈຶ່ງຊົງສ້າງການແກ້ໄຂບັນຫາບາບ. ແຕ່ການແກ້ໄຂນີ້ໄດ້ຮຽກຮ້ອງໃຫ້ບຸກຄົນຮັບຮູ້ຄວາມຈິງ ແລະເຕັມໃຈຮັບເອົາຄວາມຈິງນັ້ນເຂົ້າໄປໃນຊີວິດຂອງພວກເຂົາເຈົ້າ. ການ<u>ຮັບຄວາມຈິງນີ້ໂດຍສ່ວນຕົວ, ຈາກນັ້ນ,</u> <u>ຈະເຮັດໃຫ້ພວກເຂົາເຈົ້າມີອິສຣະພາບທາງຈິດວິນຍານ ແລະອະນຸຍາດໃຫ້ພວກເພິ່ນໄດ້ຮັບຜົນປໂຍດຈາກຄວາມສັມພັນສ່ວນຕົວກັບພຣະເຈົ້າ</u>.

ວິທີທີ່ພຣະເຈົ້າຊົງສ້າງການແກ້ໄຂບັນຫາບາບຂອງພຣະອົງ ຄືການທີ່ພຣະຄຣິດຊົງສະເດັດມາໃນແຜ່ນດິນໂລກ, ຊົງດໍາເນີນຊີວິດໂດຍປາສຈາກບາບ, ຊົງຕາຍເທິງໄມ້ກາງແຂນເປັນເຄື່ອງບູຊາໄຖ່ບາບຂອງພວກເຮົາ; ຫຼັງຈາກນັ້ນຊົງຖືກຄືນພຣະຊົນມາຈາກຄວາມຕາຍ <u>ເປັນການສະແດງວ່າພຣະອົງຊົງ, ແທ້ຈິງແລ້ວ, ເປັນພຣະເຈົ້າແລະຊົງມີພຣະອໍານາດໃຫ້ອະພັຍບາບຂອງມະນຸດ</u>. **ນີ້ແມ່ນຄວາມເປັນຈິງ.** ພຣະເຢຊູໄດ້ຊົງຢືນຢັນຄວາມເປັນຈິງນີ້ໃນພຣະຄັມພີ ໂຢຮັນ ບົດທີ່ 14 ຂໍ້ 6 ໃນເວລາທີ່ພຣະອົງໄດ້ຊົງກ່າວກັບໂທມາວ່າ: ***"ເຮົານີ້ແຫລະ, ເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ ນອກຈາກຈະມາທາງເຮົາ."***

## ນໍາໃຊ້ໃນຊີວິດ:

ການຮູ້ຈັກຄວາມຈິງຂອງພຣະຄຣິດເປັນວິທີດຽວທີ່ພວກເຮົາສາມາດມີປະສົບການເສຣີພາບ. ຈົ່ງໃຊ້ນຶ່ງໃນການນໍາໃຊ້ຕໍ່ລົງໄປນີ້:

- **ຊີ້ຕົວ.** ຈົ່ງຮັບຮູ້ຄວາມສົງສັຍທີ່ທ່ານອາດມີກ່ຽວກັບຄວາມຈິງຂອງພຣະກິດຕິຄຸນຂອງພຣະຄຣິດ. ຫຼາຍຄົນມີຄວາມຮູ້ສຶກບໍ່ແນ່ນອນກ່ຽວກັບຈຸດປະສົງຄວາມຈິງຂອງຂ່າວປະເສີດ, ແລະສັງຄົມທີ່ທັນສມັຍທີ່ມີຄວາມເຊື່ອທາງສິລທັມທີ່ກ່ຽວຂ້ອງສາມາດຂຍາຍຄວາມສົງສັຍເຫຼົ່ານັ້ນໄດ້. ຈົ່ງຍອມຮັບວ່າການຕໍ່ສູ້ຂອງທ່ານຢູ່ບ່ອນໃດ?
- **ສແວງຫາ.** ຄວາມເຊື່ອຂອງຊາວຄຣິສະຕຽນແມ່ນຄວາມຈິງ. ດັ່ງນັ້ນ, ພວກເຮົາສົມຄວນຕັດສິນໃຈແກ້ໄຂຂໍ້ສົງສັຍສ່ວນຕົວຂອງພວກເຮົາ. ຈົ່ງຊອກຫາຄົນຫຼືຊັບພະຍາກອນທີ່ສາມາດຊ່ວຍໃຫ້ທ່ານຄິດຜ່ານຄວາມສົງສັຍເຫຼົ່ານັ້ນ ແລະຢ່າຢຸດຢັ້ງຈົນກວ່າວ່າທ່ານຈະພົບຄໍາຕອບ. <u>ຄໍາຕອບເຫຼົ່ານັ້ນມີຢູ່ແທ້</u>.
- **ຊ່ອຍເຫຼືອ.** ຈົ່ງຊ່ອຍເຫຼືອໃຜຜູ້ນຶ່ງກັບຄວາມສົງສັຍຂອງລາວ. ຈົ່ງສົນທະນາກັບມິຕສະຫາຍຂອງທ່ານກ່ຽວກັບຄວາມສົງສັຍທີ່ພວກເຂົາເຈົ້າອາດຈະມີກ່ຽວກັບຄວາມຈິງຂອງຂ່າວປະເສີດຂອງອົງພຣະຄຣິດ ແລະຊ່ອຍເຫຼືອພວກເຂົາເຈົ້າແກ້ໄຂຄວາມສົງສັຍເຫຼົ່ານັ້ນໃຫ້ສໍາເລັດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**